ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

ກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ

ໃນວັນທີ 01 ຕຸລາ 2026 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຂຶ້ນ ໂດຍການໃຫ້ກຽດເປັນປະທານຂອງ ທ່ານ ອາລຸນ ບຸນຍິງ, ຮອງຜູ້ວ່າການ ທຫລ, ມີບັນດາຜູ້ຕາງໜ້າຈາກກະຊວງທີ່ກ່ຽວຂ້ອງ, ປະທານສະມາຄົມທະນາຄານທຸລະກິດ, ປະທານສະມາຄົມສະຖາບັນການເງິນຈຸລະພາກລາວ ແລະ ປະທານສະມາຄົມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເຂົ້າຮ່ວມຢ່າງພ້ອມພຽງ.

ການຈັດກອງປະຊຸມ ໃນຄັ້ງນີ້ ກໍ່ເພື່ອເປັນການຈັດຕັ້ງປະຕິບັດໜ້າທີ່ ໃນວຽກງານສ້າງນິຕິກຳ ຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ເພື່ອທົບທວນໝາກຜົນໃນການຈັດຕັ້ງປະຕິບັດເຄື່ອງມືຄຸ້ມຄອງເງິນຕາຕ່າງປະເທດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ທຫລ ຊຶ່ງເປັນວຽກງານໜຶ່ງທີ່ສຳຄັນ ໃນການຈັດຕັ້ງປະຕິບັດນະໂຍບາຍເສດຖະກິດມະຫາພາກ, ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ, ການຊຸກຍູ້ສົ່ງເສີມການຄ້າ, ການລົງທຶນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ສ້າງຄວາມເຂັ້ມແຂງຖານະການຊຳລະກັບຕ່າງປະເທດ, ຄັງສຳຮອງເງິນຕາຕ່າງປະເທດ ແລະ ການພົວພັນເສດຖະກິດກັບຕ່າງປະເທດ ຊຶ່ງທາງດ້ານນິຕິກຳຄຸ້ມຄອງວຽກງານດັ່ງກ່າວໃນໄລຍະຜ່ານມາ ໄດ້ມີການອອກລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ສປປ, ລົງວັນທີ 09 ສິງຫາ 2002 ແລະ ປັບປຸງໃນປີ 2008. ຕໍ່ມາໄດ້ຍົກລະດັບລັດຖະບັນຍັດດັ່ງກ່າວ ຂຶ້ນເປັນກົດໝາຍ ຄື: ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບປີ 2014 ແລະ ໄດ້ປັບປຸງໃນປີ 2022. ສະນັ້ນ, ເພື່ອຈັດຕັ້ງປະຕິບັດກົດໝາຍສະບັບດັ່ງກ່າວ ໃຫ້ມີ

ປະສິດພາບ ແລະ ປະສິດທິຜົນ ໃນປີ 2023, ລັດຖະບານ ຈຶ່ງໄດ້ອະນຸມັດສ້າງກົມຄຸ້ມຄອງເງິນຕາຕ່າງປະເທດ ເພື່ອເຮັດໜ້າທີ່ເປັນເສນາທິການ ໃນການຄົ້ນຄວ້ານະໂຍບາຍ, ນິຕິກຳ, ຄົ້ນຄວ້າອະນຸຍາດ ກ່ຽວກັບການນຳໃຊ້ ແລະ ການດຳເນີນທຸລະກຳກ່ຽວກັບເງິນຕາຕ່າງປະເທດ, ຕິດຕາມ ກວດກາ ແລະ ຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງເງິນຕາຕ່າງປະເທດ ພ້ອມທັງ ໄດ້ຄົ້ນຄວ້າຜັນຂະຫຍາຍນິຕິກຳໃຕ້ກົດໝາຍໃຫ້ເປັນອັນລະອຽດ ແຕ່ລະວຽກງານ ຈຳນວນ 28 ສະບັບ.

ກອງປະຊຸມດັ່ງກ່າວ ໄດ້ດຳເນີນໄປເປັນເວລາເຄິ່ງວັນ, ດ້ວຍບັນຍາກາດອັນຟົດຟື້ນ ຜູ້ເຂົ້າຮ່ວມກໍ່ໄດ້ເອົາໃຈໃສ່ຮັບຟັງ, ທຳຄວາມເຂົ້າໃຈ, ມີການປະກອບຄຳຄິດຄຳເຫັນ ແລະ ສົນທະນາແລກປ່ຽນປຶກສາຫາລືປະເດັນຕ່າງໆ ແລະ ເຮັດໃຫ້ກອງປະຊຸມບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

ຂ່າວ-ພາບ: ຫ້ອງການ ທຫລ

ຢູ່ເມືອງລາວໃຊ້ເງິນກີບລາວ